# ຮອຍພຣະບາດບົນດິນຊາຍ

## ນຳຄອບຄົວໃນການນະມັດສະການ
*ເລື່ອງຂອງທ່ານອັບຣາຮາມ*

**<u>ຈຸດປະສົງ</u>**

ວິທີການສອນຄຣິດສະຕຽນໃຫ້ເປັນສາວົກນີ້ຈະຊ່ອຍໃຫ້ຜູ້ທີ່ມາຮຽນ ໃດ້ໄວ້ວາງໃຈໃນພຣະເຍຊູທຸກໆມື້ ໃນຄະນະທີ່ພຣະອົງກຳລັງດັດແປງເຂົາ ແລະຈະສອນເຂົາກ່ຽວກັບວິທີສອນຄົນອື່ນຕໍ່ໄປດ້ວຍ. ໃນບົດຮຽນບົດນີ້ທ່ານຈະໃດ້ຮຽນວິທີໄວ້ວາງໃຈໃນພຣະຄຣິດໃນເວລາທີ່ພຣະອົງຊົງສອນທ່ານໃຫ້ເຮັດສິ່ງເຫລົ່ານີ້ ຄື:

- ຮູ້ຈັກວິທີທາງນຳຄອບຄົວຫລືລູກໆ ໃນການນະມັດສະການພຣະເຈົ້າ.
- ຮູ້ສຶກມີກຳລັງໃຈເພາະພຣະເຈົ້າຊົງປະທານພຣະພອນໃຫ້ແກ່ຄອບຄົວທີ່ນະມັດສະການພຣະອົງຮ່ວມກັນ.
- ຕອບຮັບການຮຽກຮ້ອງຂອງພຣະອົງ ໂດຍເຮັດໃຫ້ການນະມັດສະການນັ້ນເປັນສິ່ງທີ່ສຳຄັນທີ່ນຶ່ງ.

**<u>ຄຳນຳໜ້າ</u>**

ພໍ່ ແມ່ ແລະລູກໆ ຄວນໄຊ້ເວລາຮ່ວມກັນ. ຖ້າຢາກໃຫ້ຄອບຄົວມີຄວາມສຸກ ຫົວໜ້າຄອບຄົວຕ້ອງຈັດເວລາໄວ້ແຕ່ລະອາທິດ ເພື່ອຊະມາຊິກຈະເຮັດສິ່ງໃດສິ່ງນຶ່ງຮ່ວມກັນ ຢ່າງເຊັ່ນໄປກິນເຂົ້າປ່າ, ໄປກິນອາຫານນອກບ້ານ, ຫລິນກີລາ, ໄປຊອບປິ້ງຊື້ຂອງ, ແລະມີອີກຫລາຍໆ ຢ່າງທີ່ຄອບຄົວຈະໄຊ້ເວລາຮວມກັນໃດ້. ແຕ່ຍິ່ງສຳຄັນກົ່ວນັ້ນ ຖ້າຢາກໃຫ້ຄອບຄົວມີຄວາມອົບອຸ່ນ, ມີຄວາມເຂັ້ມແຂງໃນດ້ານຄວາມເຊື່ອ ແລະມີການສາມັກຄີກັນ ຄອບຄົວນັ້ນຕ້ອງມີການນະມັດສະກັນຮວມກັນໃນບ້ານຂອງຕົນແຕ່ລະມື້.

**<u>ການຄົ້ນຄົ້ວ</u>**

1. **<u>ອ່ານປະຖົມມະການ 12:8.</u>** ທ່ານອັບຣາຮາມເຫັນວ່າສິ່ງໃດເປັນສິ່ງທີ່ມີຄວາມສຳຄັນສູງເມື່ອລາວມາຮອດແຜ່ນດິນເບໂຕ?

   1.

   2.

   3.

2. **<u>ອ່ານປະຖົມມະການ 12:7 ແລະ13:18</u>** ເພາະເຫັດໃດທ່ານອັບຣາຮາມຈຶ່ງເຫັນວ່າການຕັ້ງແທ່ນບູຊາໄວ້ທຸກໆທີ່ ທີ່ລາວໄດ້ພັກອາໄສນັ້ນເປັນສິ່ງທີ່ສຳຄັນ?

_____________________________________________

3. ຜູ້ຈະນຳຄອບຄົວຂອງຕົນໃນການນະມັດສະການພຣະເຈົ້ານັ້ນຕ້ອງຮູ້ຈັກນະມັດສະການພຣະອົງພຽງລຳພັງກ່ອນ, ທ່ານອັບຣາຮາມມີຄວາມສຳພັນກັບພຣະເຈົ້າຢ່າງໃດ?

   **<u>ປະຖົມມະການ 12:1-4</u>**

   **<u>ປະຖົມມະການ 15:1-6</u>**

   **<u>ປະຖົມມະການ 17:1, 2</u>**

   **<u>ປະຖົມມະການ 18:22-26</u>**

4. **<u>ອ່ານປະຖົມມະການ 22:7-14</u> ການທີ່ທ່ານອັບຣາຮາມໄດ້ນະມັດສະການຮ່ວມກັນກັບລູກຊາຍຂອງລາວ ຄືອີຊາກນັ້ນ ເປັນການສອນພວກເຮົາກ່ຽວກັບການນະມັດສະການຮ່ວມຄອບຄົວຂອງເຮົາທຸກມື້ນີ້ຢ່າງໃດ**?

_____________________________________________

5. **<u>ອ່ານປະຖົມມະການ 26:23-25.</u>** ທ່ານອັບຣາຮາມມີອິດທິພົນຕໍ່ເອຊາກ ລູກຊາຍຂອງລາວ ຢ່າງໃດກ່ຽວກັບການເປັນຜູ້ນຳຂອງຄອບຄົວ?

_____________________________________________

## <u>ການຕັດສິນໃຈເລືອກ</u>

ມີເຮືອນຫລາຍຫລັງທີ່ບໍ່ສາມາດທີ່ຈະເອີ້ນວ່າເປັນບ້ານທີ່ອົບອຸ່ນໄດ້. ມີພໍ່ ແມ່ ແລະລູກຫລາຍໆຄົນທີ່ບໍ່ສາມາດທີ່ຈະເອີ້ນວ່າວເປັນຄອບຄົວໄດ້. ມີຫລາຍຄອບຄົວທີ່ບໍ່ໄດ້ຕັ້ງແທ່ນບູຊາໄວ້ໃນບ້ານ. ແຕ່ເຮົາຄວນມີຄວາມແຕກຕ່າງຈາກຄົນອື່ນໆ. lລູກຫລານທີ່ພຣະເຈົ້າໄດ້ເລືອກໃຫ້ເຮົາລ້ຽງດູນັ້ນ ສົມຄວນທີ່ຈະໄດ້ຮັບພຣະພອນຈາກພຣະເຈົ້າ.

ທ່ານຈະຕັດສິນໃຈທີ່ເລີ່ມຕົ້ນໃນອາທິດນີ້ຫລືບໍ່ ທີ່ຈະນຳຄອບຄົວຂອງທ່ານໃນການນະມັດສະການພຣະເຢຊູ?

## <u>ການປະຕິບັດ</u>

1. ຖ້າວ່າຈະໃຫ້ມີການນະມັດສະການໃນຄອບຄົວຂອງທ່ານ ທ່ານຕ້ອງຈັດເວລໄວ້ໃນລາຍການປະຈຳວັນຂອງທ່ານ.

   ເວລາໃດເໝາະສົມທີ່ສຸດສຳລັບຄອບຄົວຂອງທ່ານທີ່ຈະຈັດໄວ້ເປັນເວລານະມັດສະການ?

   ຫ້ອງໃດເໝາະສົມທີ່ສຸດໃນເຮືອນຂອງທ່ານທີ່ຈະໃຊ້ສຳລັບການນະມັດສະການ?

2. ຄິດເບິ່ງຂໍ້ນີ້: "ມັນເປັນໜ້າທີ່ຂອງຫົວໜ້າຄອບຄົວທີ່ຈະເຮັດໃຫ້ເວລານະມັດສະການນັ້ນ ເປັນເວລາທີ່ໜ້າສົນໃຈ. ຖ້າວ່າມີຄວາມຕັ້ງໃຈ ແລະມີການຈັດຕຽມເປັນຢ່າງດີ ເມື່ອຄອບຄົວເຂົ້າເຝົ້າພຣະເຈົ້າດ້ວຍການນະມັດສະການ ທຸກຄົນຈະພົບກັບຄວາມຊື່ນຊົມຍິນດີ ແລະຈະນຳຜົນອັນດີຕະຫລອດໄປເປັນນິດມາໃຫ້..." ຈາກໜັງສືຂອງນາງເອເລັນ ຈີ ໄວ້ *Child Guidance ໜ້າ. 521*

   ຄຳດັ່ງກ່າວນີ້ເປັນການທ້າທາຍ ຫລືໃຫ້ກຳລັງໃຈທ່ານຢ່າງໃດ?

3. ມີຫລາຍວິທີທາງທີ່ທ່ານສາມາດນຳຄອບຄົວຂອງທ່ານມານະມັດສະການພຣະເຈົ້າາໃດ້. ຕໍ່ໄປນີ້ເປັນຂໍ້ແນະນຳເພື່ອທ່ານຈະເລີ່ມເຮັດຕາມໃດ້:

   **ການຮ້ອງເພງ**
   - ເລືອກເອົາເພງທີ່ຄອບຄົວຂອງທ່ານມັກຮ້ອງ.
   - ຖ້າທ່ານບໍ່ມັກຮ້ອງເພງ ເປີດເທບ ຫລື ຊີດີ ຟັງເພງສັນສະເສີນກໍໃດ້.

   **ການອາທິຖານ**
   - ເຊີນພຣະວິນຍານມາອວຍພອນພພຣະຄັມ ແລະຄອບຄົວຂອງທ່ານເມື່ອມານະມັດສະການພຣະເຈົ້າຮ່ວມກັນ.

   **ການສຶກສາຄົ້ນຄ້ວ**
   - ທ່ອງຈຳຂໍ້ພຣະຄັມພີ.
   - ອ່ານເລື່ອງສັ້ນໆ ໃນພຣະຄັມພີ.
   - ສະແດງເລື່ອງ ຫລືຄຳອຸປະມາໃນພຣະຄັມພີ ຫລັງຈາກອ່ານຮ່ວມກັນແລ້ວ.
   - ສຶກສາຄົ້ນຄ້ວພຣະຄັມພີເພື່ອຫາຄຳຕອບທີ່ຂ້ອງໃຈຂອງພວກລູກໆ ຂອງທ່ານ. ສອນໃຫ້ລູກຄົ້ນວ້ວພຣະຄັມພີ.

   **ການປະຕິບັດ**
   - ຂໍໃຫ້ລູກແຕ້ມຮູບກ່ຽວກັບເລື່ອງທີ່ໃດ້ຄົ້ນຄ້ວຮ່ວມກັນແລ້ວ ແລະຖາມພວກເຂົາວ່າ ເລື່ອງນີ້ມີຄວາມສຳຄັນຕໍ່ພວກເຂົາຢ່າງໃດ.

- ຖາມສະມາຊິກຄອບຄົວເບິ່ງວ່າບົດທີ່ໄດ້ອ່ານໄປແລ້ວນັ້ນ ຈະນຳມາປະຕິບັດໃນຄອບຄົວໄດ້ຢ່າງໃດ.
- ປຶກສາກັນກ່ຽວກັບວິທີທີ່ຈະເອົາພຣະຄັມຂອງພຣະເຈົ້າມາປະຕິບັບໃນຊີວິດປະຈຳວັນ.

**ການອາທິຖານ**

- ຖາມເບິ່ງວ່າໃຜມີສິ່ງໃດທີ່ຕ້ອງການໃຫ້ອາທິຖານເພື່ອບໍ່.
- ຕັ້ງວົງຈັບມືກັນອາທິຖານ.
- ເຊີນຊະມາຊິກຄອບຄົນແຕ່ລະຄົນ ອາທິຖານແຕ່ລະເທື່ອ.
- ນຳຄອບຄົວຂອງທ່ານໃນການອາທິຖານ –ໂດຍໄຊ້ຄຳອາທິຖານຂອງອົງພຣະຜູ້ເປັນເຈົ້າ.

## ຄຳທ້າທາຍ

ຈົ່ງປຶກສາກັນເບິ່ງກັບຜູ້ໃດຜູ້ນຶ່ງທີ່ຢູ່ໃນຫ້ອງນີ້ ກ່ຽວກັບແຜນການໃນການນະມັດສະການທີ່ມ່ວນຊື່ນ, ທີ່ມີຄວາມໝາຍ, ທີ່ງ່າຍໆ ແລະສົມຄວນທີ່ຈະເຮັດກັບລູກໆ.

**ການຮ້ອງເພງ**

- ພວກເຮົາຈະມີການຮ້ອງເພງຫລືບໍ່? ພວກເຮົາຈະຮ້ອງເພງຫຍັງ?

**ການອາທິຖານ**

- ໃຜຈະເປັນຜູ້ອາທິຖານ?

**ການຄົ້ນຄ້ວ**

- ພອກເຮົາຈະສຶກສາພຣະຄັມພີບົດໃດຮ່ວມກັນ?

**ການປະຕິບັດ**

- ທ່ານຈະຖາມລູກຂອງທ່ານຢ່າງໃດ ຈຶ່ງຈະເຂົ້າເຖິງຈິດໃຈຂອງພວກເຂົ້າໄດ້?
- ການກະທຳຢ່າງໃດຈະນຳພຣະຄັມຂອງພຣະເຈົ້າເຂົ້າໄປເຖິງຈິດໃຈຂອງພວກເຂົາໃດ?

**ການອາທິຖານ**

- ທ່ານຈະນຳຄອຍບຄົວຂອງທ່ານໃນການອາທິຖານຢ່າງໃດ?